# ບົດນຳ

ການນຳໃຊ້ແນວພັນເຂົ້າສະນິດດຽວ ເປັນເວລາຍາວນານ "ຫຼາຍກວ່າ 3 ລະດູ" ໂດຍບໍ່ມີ ການຄັດເລືອກແນວພັນ ຈະເຮັດໃຫ້ແນວພັນ ມີການເຊື່ອມຄຸນນະພາບ ເຊັ່ນ: ມີການເຈືອປົນ ລະຫວ່າງແນວພັນ ເຮັດໃຫ້ຕົ້ນ ເຂົ້າບໍ່ມີຄວາມສະໝ່ຳສະເໝີ, ມີຕົ້ນສູງຕົ້ນຕ່ຳ, ອອກດອກ ບໍ່ສະໝ່ຳສະເໝີ, ເມັດເຂົ້າມີຫຼາຍສີ, ມີເມັດນ້ອຍເມັດໃຫຍ່ປົນກັນ ໃນນາໄຮ່ດຽວ ເຮັດໃຫ້ຜົນຜະລິດຕົກຕ່ຳລົງ, ຄວາມທົນທານ ຕໍ່ກັບນ້ຳຖ້ວມຫລຸດລົງ, ຄວາມທົນທານ ຕໍ່ກັບໄພແລ້ງຫລຸດລົງ, ຄວາມທົນທານຕໍ່ກັບພະຍາດ ແລະ ແມງໄມ້ຫລຸດລົງ, ເປີເຊັນເຂົ້າ ສານສີໄດ້ລຸດລົງ (ໄດ້ເຂົ້າສານໜ້ອຍ), ຄຸນນະພາບໃນການກິນບໍ່ດີ (ເຂົ້າແຂງ), ຂາຍໄດ້ລາຄາຕ່ຳ.

ດັ່ງນັ້ນ, ການຄັດເລືອກແນວພັນ ເຂົ້າ ເພື່ອເຮັດ ໃຫ້ມີຄວາມບໍລິສຸດ ຈຶ່ງເປັນສິ່ງທີ່ສຳຄັນ ແລະ ຈຳເປັນ ສຳລັບແກ້ໄຂບັນຫາທີ່ກ່າວມາຂ້າງເທິງນັ້ນ. ສະນັ້ນ ຄູ່ມືເຫຼັ້ມນີ້ສາມາດຊ່ວຍໃຫ້ຊາວນານຳໃຊ້ເພື່ອຜະລິດເມັດພັນເຂົ້າໄວ້ນຳໃຊ້ເອງໄດ້.

## ການຜະລິດເມັດພັນບໍລິສຸດ

ການເກັບຮວງ: ໃຫ້ເກັບເອົາຮວງແມ່ ໂດຍເລືອກເອົາຮວງຈາກຕົ້ນ ທີ່ມີໃບວີສູງທີ່ສຸດ ພາຍໃນສຸມ, ເກັບເອົາ 1 ຮວງຕໍ່ 1 ສຸມ ຈາກນັ້ນໃຫ້ແກະກາບໃບວີອອກ, ໃນ 100 ຮວງໃດໃຫ້ເຮັດເປັນ 1 ມັດ ແລ້ວຕາກແດດ 7-10 ແດດ ແລ້ວເກັບຮັກສາໄວ້ເພື່ອລໍຖ້າຕົກກ້າ, ໃຫ້ເກັບປະມານ 500 ຮວງເປັນຢ່າງຕ່ຳ.





**ການຕົກກ້າ**

ການຕົກກ້າແມ່ນໃຫ້ຕົກເປັນຮວງ, ໃຫ້ແຊ່ນ້ຳ 24 ຊມ ແລ້ວບົ່ມ 24-36 ຊມ ເມື່ອສັງເກດເຫັນເມັດເຂົ້າແຕກຕຸ່ມແລ້ວຈຶ່ງເອົາໄປຕົກກ້າ.





**ການປັກດຳ**

ໃຫ້ປັກດຳ 1 ກົບກ້າຕໍ່ສຸ່ມ, ປັກດຳ 20x20 ຊມ. ໃນ 1 ຮວງໃດໃຫ້ດຳ 1 ແຖວ, ຂະໜາດແຖວ 3 ແມັດ, ກ້າທີ່ເຫຼືອແຖວໃຫ້ຖິ້ມ, ສຳລັບລະດູຝົນສາມາດປັກດຳໄດ້ ເມື່ອກ້າມີອາຍຸໄດ້ 20-25 ມື້ ແລະ ລະດູແລ້ງ ປັກດຳໄດ້ ເມື່ອກ້າອາຍຸໄດ້ 25-30 ມື້.





**ການໃສ່ຝຸ່ນ:** ນາດິນຊາຍ ໃຫ້ໃສ່ຝຸ່ນ ສູດ 15-15-15 ໃນອັດຕາ 200 ກລ/ຮຕ, ນາດິນໜຽວໃຫ້ໃສ່ຝຸ່ນສູດ 16-20-00 ໃນອັດຕາ 150 ກລ/ຮຕ ຫຼັງຈາກປັກດຳໄດ້ 7-10 ມື້, ແລະ ໃຫ້ໃສ່ຝຸ່ນເລັ່ງ ສູດ 46% ຫຼັງຈາກປັກດຳໄດ້ 20 ແລະ 40 ມື້ ໃນອັດຕາ 60 ກລ/ຮຕ ຕໍ່ຄັ້ງ. ໃສ່ຝຸ່ນຄອກໃນອັດຕາ 5-10 ໂຕນ/ຮຕ ຈະດີທີ່ສຸດ.

**ການຕັດເຂົ້າປົນ:** ຖ້າສັງເກດເຫັນວ່າຕົ້ນເຂົ້າທີ່ປູກໃນ 1 ແຖວອອກດອກ ບໍ່ໝົດພາຍໃນ 7 ມື້ ໃຫ້ຕັດຖິ້ມໝົດແຖວ ເລືອກເອົາແຕ່ແຖວ ທີ່ອອກດອກ ສະເໝີກັນ ໄວ້ເປັນແນວພັນ.

**ການເກັບກ່ຽວ:** ເວລາເກັບກ່ຽວທີ່ເໝາະສົມແມ່ນ 30 ມື້ ຫຼັງຈາກເຂົ້າ ອອກດອກໄດ້ 50%, ໃຫ້ກ່ຽວ ເອົາແຕ່ແຖວທີ່ສຸກແກ່ ສະເໝີກັນ.

## ການຜະລິດເມັດພັນລຸ້ນ 1

**ການຕົກກ້າ:** ເອົາເມັດພັນບໍລິສຸດ ມາຕົກກ້າໃນອັດຕາ 0,5-1 ກລ/10 ຕາແມັດ ເພື່ອໃຫ້ໄດ້ກ້າກົບໃຫຍ່. ຫຼັງຈາກຫວ່ານກ້າໄດ້ 7-10 ມື້ ໃຫ້ໃສ່ຝຸ່ນເລັ່ງໃນອັດຕາ 1 ກລ/100 ຕາແມັດ, ບໍ່ໃຫ້ໃສ່ຝຸ່ນຊ້າ ເພາະຈະເຮັດ ໃຫ້ກ້າບໍ່ແຂງແຮງ.









**ການປັກດຳ:** ປັກດຳ 1 ກົບກ້າ/ສຸ່ມ, ໄລຍະຫ່າງລະຫວ່າງຕົ້ນ ແລະລະຫວ່າງແຖວ 20 x 20 ຊມ, ຈະນຳໃຊ້ເມັດພັນ 3-5 ກລ ຕໍ່ 1 ໄລ່ ຫຼື 20-30 ກລ ຕໍ່ 1 ຮຕ.





## ການຕັດເຂົ້າປົນ

ເມື່ອສັງເກດເຫັນເຂົ້າປົນ ເກີດຂຶ້ນໃນແປງຜະລິດເມັດພັນ ໃຫ້ຕັດຖິ້ມເປັນສຸມ, ການຕັດເຂົ້າປົນ ແມ່ນໃຫ້ປະຕິບັດ ໃນຊ່ວງເຂົ້າອອກດອກ ແລະ ກ່ອນເກັບກ່ຽວ.








ສູນຄົ້ນຄ້ວາເຂົ້າ ແລະ ພືດເສດຖະກິດ, ຕັ້ງຢູ່ເສັ້ນທາງທ່າດິນແດງ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ, ຕູ້ປນ 811.
ໂທລະສັບ: 030-5260232

ຂຽນໂດຍ: ເພັດມະນີແສງ ຊ້າງໄຊຍະສານ, ນັກປັບປຸງພັນເຂົ້າ
ກວດແກ້ໂດຍ: ພູມີ ອິນທະປັນຍາ, ນັກປັບປຸງພັນເຂົ້າອາວຸໂສ
E-mail: phetmanisengx@yahoo.com

# ຄູ່ມື
# ການຜະລິດເມັດພັນເຂົ້າ ທ່າດອກຄຳ 1- ທົນນ້ຳຖ້ວມ

ມີນາ 2013



NTPC
Powering the Future

ບໍລິສັດໄຟຟ້ານ້ຳເທີນ 2 ຈຳກັດ
ພະແນກສິ່ງແວດລ້ອມ ແລະ ສັງຄົມ
ໂຄງການລຸ່ມເຂື່ອນ ແລະ ເຮືອນຈັກ
ໜ່ວຍງານຟື້ນຟູຊີວິດການເປັນຢູ່